*(Unofficial translation)*

**Lao People's Democratic Republic**
**Peace Independence Democracy Unity Prosperity**

**Prime Minister Office** No. 829/PMO
Vientiane Capital, 19 July 2021

# NOTICE

**To:** - Ministers and Heads of Ministry Equivalence,
- Vientiane Capital and Provincial Governors.

**Subject:** Extended the implementation of the Measures on Containment, Prevention, and Comprehensive Response to the COVID-19 Pandemic from 20 July to 03 August 2021.

- Pursuant to the Decree on organization and function of the Prime Minister Office, No. 93/PM, dated 03 March 2017;
- Pursuant to Prime Minister's Order No. 15/PM, dated 21 April 2021;
- Pursuant to the Guidance of the Prime Minister on 18 July 2021.

The Prime Minister Officer has the honour to inform that: through the assessment of the COVID-19 outbreak situation on 16 July 2021 and the implementation of the Prime Minister's Order No. 15/PM, dated 21 April 2021, Notice No. 745/PMO, dated 04 July 2021, and relevant measures issued by various sectors, it has been found that we are able to control the outbreak at a decent level, leading to no community infection cases at some period, especially in Vientiane Capital. However, due to the number of Lao migrant workers returning home from neighbouring countries increased day by day, resulting in a surge of imported cases and in some days there were more than 100 cases and infected with either Delta or Alpha variant which are highly contagious than the original variant. Against this backdrop, we must continue our comprehensive preparedness in response to the returning home of Lao migrant workers and disease screening measures especially a strict surveillance along the border. Since the outbreak situation in our neighbouring countries continue to worsen and infection with many variants, it will be better to control if returning Lao migrant workers have properly come back through immigration checkpoints, but on the other hand, if they illegally sneak in, it will pose a great risk of mass community outbreak. Therefore, it is necessary that the Government must continue all measures stated in the Prime Minister's Order No. 15/PM, dated 21 April, Notice No. 745/PMO, dated 04

July 2021 and other relevant advisory notices previously issued by the Central Tasks Force Committee for another 15 days staring at 00:00 hrs of 20 July to 24:00 hrs of 03 August 2021, and easing some other measures as follows:

1. **<u>Some measures to be continued</u>:**
   - 1.1 Continue to strengthen the effort in searching for the individuals who are infected and bring them for treatment by enhancing the coordination and cooperation between the relevant local authorities at all levels and the responsible medical units, as well as relevant sector in the society through various means/methods; and to increase the vaccine inoculation to the target groups as the set target.
   - 1.2 Continue to close all night clubs, karaoke shops, entertainment venues, cinema, snooker cafes, spas, internet café, and all types of gaming shops nationwide.
   - 1.3 Continue to prohibit all types of physical contacted sports such as: soccer/football, boxing and others in in provinces that still have community transmission cases.
   - 1.4 Continue to close all industrial factories and handicraft workshops located in area or village identified as red zone, except for factories that their employees and workers have already completed 2 doses of vaccination, factories that have dormitories for its workers located inside the facility, factories for producing consumers' goods, medicine, pandemic preventive items and medical equipment, but they must strictly follow the preventive measures issued by the Task Force Committee. During the work suspension period, the business owner of the factory shall issue rule to regulate its workers and coordinate with relevant authority to completely follow relevant rules and regulations of the Government on welfare policy.
   - 1.5 Continue to prohibit in and out of people of the infected area (red zone) as identified by the Task Force Committee, except for individual that have been approved by the relevant local authority on the condition of essential necessity.
   - 1.6 Continue to prohibit all type of social events or gathering in all locations.
   - 1.7 Continue to strengthen and strictly implementing all relevant prevention, control and response measures, namely body temperature check, at least 1-meter physical distancing, wearing mask, and hand washing with soap or hand sanitizer.
2. **<u>Relaxed measures to be continued</u>:**
   - 2.1 Continue to allow shopping malls, wholesale and retail shops, supermarkets, minimarts, fresh markets, food vendors and night markets to open by practicing body temperature check, at least 1-meter physical distancing, wearing mask, hand washing with soap or hand sanitizer.
   - 2.2 Continue to open barber shops and salons outside the red zone but avoid over-crowded customers inside and shall strictly implement the preventive measures.
   - 2.3 Continue to allow restaurants, cafés, tourist attractions and food gardens within province with no community outbreak to open as well as dine-in by fully compliance with the preventive measures namely at least 1-meter physical distancing, and strictly prohibit serving of all type alcohol beverages, and implement all relevant preventive measures.

2.4 Continue to allow organization of meetings at venue located outside the red zone but must fully compliance with the preventive measures issued by the Task Forces, namely body temperature checking, at least 1-meter physical distancing, wearing mask, and hand washing with soap or hand sanitizer.

2.5 Continue to allow fishing boats to operate along the rivers bordering with neighbouring country between 06:00 hrs to 18:00 hrs. Local authorities together with the national force and public security in the area shall issue appropriate management measures, including deciding the number of fishing boat and shall strictly record time of departure and return of the boat, as well as to strictly and closely monitor the implementation.

2.6 Continue to allow area without community infection cases to commute as normal.

2.7 Continue to allow land, water and air logistic between provinces with no community outbreak without quarantine; for foreigners entering Lao PDR with the purpose of travelling to other provinces shall provide their travel document, 14 days quarantine certificate and permission letter from the Central Task Force Committee to local authority in order to be exempt from quarantine at the destination province. For foreigners working and living in Lao PDR for certain period of time shall be treated the same as the local.

- For passenger and traveller travelling by car into and out of provinces with community outbreak cases have to completed 2 doses of vaccination and will not subjected to quarantine and do not need to seek approval from destination province before entering. But must fully compliance with the preventive measures issued by the Task Forces, namely body temperature checking, at least 1-meter physical distancing, wearing mask, and hand washing with soap or hand sanitizer. For some provinces in Central and Southern regions currently facing community outbreaks and large number of returning Lao migrant workers, the local authority shall issue strict commuting measures for both within the province and between provinces.

2.8 Continue to allow drivers and staffs for cross-provincial delivery to deliver their goods to the end recipient and between Vientiane Capital without transhipment, COVID-19 test and quarantine at their destination, but must strictly follow the preventive measures issued by the Task Force Committee. For cross-country movement of goods shall follow the previous practice. For practical implementation relevant sectors shall follow the Central Task Force Committee's Advisory and Ministry of Public Work and Transport's Advisory No. 242/MPWT, dated 23 April 2021.

2.9 Ministries, Ministry-equivalent, Vientiane Capital, enterprises in Vientiane Capital shall consider allowing their staffs, officers and employees to resume their work as normal, but strictly implement the preventive measures namely body temperature checking, provide hand sanitizer at the entrance, wearing mask, physical distancing, and hand washing with soap or hand sanitizer.

2.10 Continue to allow the pre-learning, general, vocational, college and higher educational institutions in province that have no community transmission cases and with the permission from the Provincial's Task Force Committee, to resume their operation.

3. **New Relaxed Measures:**
   3.1 Allow indoor and outdoor sports complex with proper business license in Vientiane Capital and other provinces with no community outbreak to open but prohibit to sell any alcohol beverages and shall strictly follow prevention and control measures.
   3.2 Allow massage shops in Vientiane Capital and other provinces with no community outbreak to open but service provider and receiver must complete 2 doses of vaccines as well as shall strictly follow the prevention and control measures and all massage shops shall be close at 20:00.
   3.3 Allow vocational education, pedagogy and all higher education in Vientiane Capital to resume by arranging social distancing classroom and strictly follow the strict prevention and control measures.
4. Central and Southern provincial authority shall coordinate with relevant sectors to assess probability of increasing number of quarantine facilities as well as established consultation mechanism between provinces to assist each other both on quarantine facilities and medical personnel in order to help each other and reduce the risk of infection inside quarantine facilities and identify facilities that can be convert into venue for treatment of no symptom patients, including mobilization of doctors, nurses and officers as a preparedness to prevent the no patient bed scenario.
5. The Government support the spirit of assisting one another at the time of need of the Lao People nationwide, including business owner both domestically and internationally at all levels contributing to the implementation of policies and measures issued by the Government in all types and forms leading to the success of maintaining peace and security at this crucial time.
6. Ministries, Ministry-equivalent, local authorities and the Task Force Committee at all levels shall strictly and responsively implement this Notice.

Therefore, it is the honour to notify all sectors nationwide for your kind information and strict implementation of this Notice.

Minister,

Permanent Secretary of the Prime Minister Office

(Signed and Sealed)

Khamjane Vongphosy

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເລກທີ 829 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 19 ກໍລະກົດ 2021

# ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ COVID-19 ໃນໄລຍະ ວັນທີ 20 ກໍລະກົດ - 03 ສິງຫາ 2021.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມ ຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ການຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 18 ກໍລະກົດ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: **ອີງຕາມການປະເມີນສະພາບການລະບາດ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ສະບັບເລກທີ 745/ຫສນຍ, ລົງວັນທີ 04 ກໍລະກົດ 2021 ແລະ ມາດຕະການຕ່າງໆ ທີ່ໄດ້ວາງອອກ ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂັ້ນສູນກາງ ຄັ້ງວັນທີ 16 ກໍລະກົດ 2021 ເຫັນວ່າ ປະເທດພວກເຮົາສາມາດຄວບຄຸມການລະບາດໄດ້ໃນລະດັບດີ, ເຮັດໃຫ້ຕົວເລກຜູ້ຕິດເຊື້ອພາຍໃນຊຸມຊົນຫຼຸດລົງເປັນສູນໃນບາງໄລຍະ ໂດຍສະເພາະໃນນະຄອນຫຼວງວຽງຈັນ. ແຕ່ເຖິງຢ່າງໃດກໍ່ຕາມ, ເນື່ອງຈາກແຮງງານລາວທີ່ຢູ່ປະເທດໃກ້ຄຽງ ກັບຄືນມາ ສປປ ລາວ ນັບມື້ເພີ່ມຂຶ້ນ ເຮັດໃຫ້ຕົວເລກການຕິດເຊື້ອຈາກການນຳເຂົ້າໃນທົ່ວປະເທດ ແມ່ນເພີ່ມຂຶ້ນສູງ, ສົ່ງບາງວັນມີຫຼາຍກວ່າ 100 ກໍລະນີ ທີ່ແມ່ນທັງສາຍພັນເດວຕາ ແລະ ອານຟາ ສາມາດແຜ່ເຊື້ອໄດ້ງ່າຍ ແລະ ໄວກວ່າສາຍພັນດັ້ງເດີມ. ສະນັ້ນ, ພວກເຮົາ ຕ້ອງສືບຕໍ່ກະກຽມຄວາມພ້ອມຮອບດ້ານ ເພື່ອຮອງຮັບການນຳເຂົ້າແຮງງານຂອງລາວກັບຄືນປະເທດ ທັງເຝົ້າລະວັງພະຍາດດັ່ງກ່າວ ໂດຍສະເພາະ ຢູ່ຕາມເຂດຊາຍແດນ ຢ່າງເຂັ້ມງວດ. ຍ້ອນສະພາບການລະບາດຢູ່ບັນດາປະເທດໃກ້ຄຽງຍັງສືບຕໍ່ຮຸນແຮງ ແລະ ມີຫຼາຍສາຍພັນ, ຖ້າແຮງງານລາວກັບຄືນປະເທດ ຜ່ານດ່ານຕ່າງໆທີ່ຖືກຕ້ອງ ແມ່ນຈະມີຄວາມສະດວກໃນການຄວບຄຸມ. ແຕ່ຖ້າເຂົ້າມາຕາມຊາຍແດນຕ່າງໆທີ່ຜິດກົດໝາຍ ນັ້ນ ເຮັດໃຫ້ມີຄວາມສ່ຽງ ແລະ ເກີດການລະບາດໃນຊຸມຊົນເປັນວົງກວ້າງ. ຍ້ອນແນວນັ້ນ, ລັດຖະບານ ຈຳເປັນຕ້ອງໄດ້ສືບຕໍ່ປະຕິບັດບັນດາມາດຕະການທີ່ໄດ້ລະບຸໃນຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ສະບັບເລກທີ 745/ຫສນຍລົງວັນທີ 04 ກໍລະກົດ 2021 ແລະ ບັນດາຄຳແນະນຳຂອງຄະນະສະເພາະກິດຂັ້ນສູນກາງ ອອກໄປຕື່ມອີກ 15 ວັນ ໂດຍເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 20 ກໍລະກົດ ຫາ ເວລາ 24:00 ໂມງ ຂອງວັນທີ 03 ສິງຫາ 2021, ພ້ອມທັງ ຜ່ອນຜັນບາງມາດຕະການ ດັ່ງນີ້:**

1. <u>ມາດຕະການສືບຕໍ່ປະຕິບັດ:</u>

   1.1. ສືບຕໍ່ເພີ່ມທະວີການຊອກຫາຜູ້ຕິດເຊື້ອຢູ່ຕາມຊຸມຊົນຕ່າງໆ ມາປິ່ນປົວ ໂດຍມີການສົມທົບ ລະຫວ່າງອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ກັບ ມາດຕະການທາງການແພດ ແລະ ພາກສ່ວນຕ່າງໆ ຂອງສັງຄົມ ດ້ວຍຫຼາຍວິທີ; ພ້ອມທັງ ເພີ່ມການສັກວັກຊິນແກ່ກຸ່ມເປົ້າໝາຍຕ່າງໆ ໃຫ້ໄດ້ຕາມຄາດໝາຍ.

   1.2. ສືບຕໍ່ປິດຮ້ານກິນ-ດື່ມ, ຄາຣາໂອເກະ, ສະຖານບັນເທີງ, ໂຮງສາຍຮູບເງົາ, ຮ້ານສະໜຸກເກີ, ຮ້ານສະປາ, ອິນເຕີເນັດຄາເຟ ແລະ ຮ້ານເກມທຸກປະເພດ ໃນທົ່ວປະເທດ.

   1.3. ສືບຕໍ່ຫ້າມຫຼິ້ນກິລາທີ່ຮ່າງກາຍມີການສຳພັດກັນ ເຊັ່ນ: ບານເຕະ, ຕີມວຍ ແລະ ອື່ນໆ ຢູ່ແຂວງທີ່ມີການລະບາດໃນຊຸມຊົນ.

   1.4. ສືບຕໍ່ປິດບັນດາໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫົວໜ່ວຍທຸລະກິດ ຢູ່ໃນເຂດ ຫຼື ບ້ານທີ່ຖືກກຳນົດເປັນເຂດແດງ, ຍົກເວັ້ນ ຫົວໜ່ວຍການຜະລິດຕ່າງໆທີ່ພະນັກງານ, ກຳມະກອນ ໄດ້ສັກວັກຊິນຄົບໂດສແລ້ວ, ມີທີ່ພັກຢູ່ໃນສຳນັກງານ ຫຼື ບໍລິເວນຫົວໜ່ວຍການຜະລິດຂອງຕົນ, ແຕ່ໃຫ້ມີການຄຸ້ມຄອງຕາມມາດຕະການປ້ອງກັນທີ່ຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ. ໃນໄລຍະພັກວຽກຢູ່ແຕ່ລະບ່ອນ, ໃຫ້ຜູ້ປະກອບການຂອງບັນດາຫົວໜ່ວຍການຜະລິດທີ່ປິດ ວາງລະບຽບການໃນການຄຸ້ມຄອງແຮງງານຢູ່ໃຕ້ຄວາມຮັບຜິດຊອບຂອງຕົນ ແລະ ປະສານສົມທົບກັບອົງການກ່ຽວຂ້ອງ ເພື່ອປະຕິບັດນະໂຍບາຍ ສະຫວັດດີການ ໃຫ້ແກ່ແຮງງານເຫຼົ່ານັ້ນ ຖືກຕ້ອງ, ຄົບຖ້ວນ ຕາມລະບຽບການ.

   1.5. ສືບຕໍ່ຫ້າມບຸກຄົນເດີນທາງ ເຂົ້າ-ອອກ ເຂດທີ່ມີການຕິດເຊື້ອ (ເຂດແດງ) ຕາມການກຳນົດ ຂອງຄະນະສະເພາະກິດ ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງຂັ້ນທີ່ກ່ຽວຂ້ອງ ດ້ວຍເງື່ອນໄຂ ແລະ ເຫດຜົນຈຳເປັນ.

   1.6. ສືບຕໍ່ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວທຸກຮູບແບບ ຢູ່ທຸກສະຖານທີ່.

   1.7. ສືບຕໍ່ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດບັນດາມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ດ້ວຍການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື.

2. <u>ມາດຕະການຜ່ອນຜັນທີ່ສືບຕໍ່ປະຕິບັດ</u> :

   2.1. ສືບຕໍ່ອະນຸຍາດໃຫ້ເປີດສູນການຄ້າ, ຮ້ານຂາຍຍົກ-ຂາຍຍ່ອຍ, ຮ້ານຊຸບເປີມາເກັດ, ຮ້ານມິນິມາດ, ຕະຫຼາດສົດ, ຕະຫຼາດຂາຍອາຫານ, ຕະຫຼາດກາງຄືນ ໂດຍໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ດ້ວຍການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື.

   2.2. ສືບຕໍ່ອະນຸຍາດໃຫ້ເປີດຮ້ານຕັດຜົມ ແລະ ຮ້ານເສີມສວຍ ຢູ່ນອກເຂດແດງ ແຕ່ບໍ່ໃຫ້ລູກຄ້າແອອັດຢູ່ໃນຮ້ານ ແລະ ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ.

   2.3. ສືບຕໍ່ອະນຸຍາດໃຫ້ເປີດຮ້ານອາຫານ, ຮ້ານກາເຟ, ສະຖານທີ່ທ່ອງທ່ຽວ ແລະ ສວນອາຫານ ຢູ່ແຂວງທີ່ບໍ່ມີການລະບາດໃນຊຸມຊົນ ໂດຍອະນຸຍາດໃຫ້ນັ່ງກິນ-ດື່ມ ໃນສະຖານທີ່ບໍລິການດັ່ງກ່າວໄດ້, ແຕ່ໃຫ້ຈັດບ່ອນນັ່ງໃຫ້ມີໄລຍະຫ່າງ 01 ແມັດ ຂຶ້ນໄປ ທັງບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຢ່າງເດັດຂາດ ແລະ ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອຢ່າງເຂັ້ມງວດ.

2.4. ສືບຕໍ່ອະນຸຍາດໃຫ້ຈັດກອງປະຊຸມ ຢູ່ສະຖານທີ່ນອກເຂດແດງ ແຕ່ຕ້ອງປະຕິບັດຕາມມາດຕະການ ຂອງຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື ເລື້ອຍໆ.

2.5. ສືບຕໍ່ອະນຸຍາດໃຫ້ນຳໃຊ້ເຮືອຫາປາ ເພື່ອຫາປາຕາມລຳນ້ຳເຂດຊາຍແດນລະຫວ່າງປະເທດ ໃນໄລຍະເວລາ ແຕ່ 06:00 ໂມງ ຫາ 18:00 ໂມງ ໂດຍໃຫ້ອົງການປົກຄອງທ້ອງຖິ່ນ ສົມທົບກັບ ກຳລັງ ປກຊ-ປກສ ຢູ່ແຕ່ລະພື້ນທີ່ ອອກລະບຽບການຄຸ້ມຄອງ, ກຳນົດຈຳນວນເຮືອຫາປາ ກ່ອນອອກເຄື່ອນໄຫວແຕ່ລະມື້ໃຫ້ສ້າງບັນທຶກການປ່ອຍອອກ ແລະ ບັນທຶກການເຂົ້າມາຈອດ, ພ້ອມນັ້ນ ກໍໃຫ້ຕິດຕາມກວດກາ ການຈັດຕັ້ງປະຕິບັດ ຢ່າງໃກ້ຊິດ ແລະ ເຂັ້ມງວດ.

2.6. ສືບຕໍ່ອະນຸຍາດໃຫ້ເດີນທາງເຂົ້າ-ອອກ ຢູ່ພາຍໃນທ້ອງຖິ່ນ ທີ່ບໍ່ມີການລະບາດໃນຊຸມຊົນ ໄດ້ປົກກະຕິ.

2.7. ສືບຕໍ່ອະນຸຍາດໃຫ້ດຳເນີນການຂົນສົ່ງໂດຍສານທາງບົກ, ທາງນ້ຳ ແລະ ທາງອາກາດ ລະຫວ່າງ ແຂວງຕໍ່ແຂວງທີ່ບໍ່ມີການລະບາດໃນຊຸມຊົນໄດ້ ໂດຍບໍ່ໃຫ້ມີການຈຳກັດບໍລິເວນ; ສຳລັບຄົນຕ່າງປະເທດທີ່ເດີນທາງເຂົ້າ ສປປ ລາວ ມີຈຸດປະສົງເດີນທາງໄປແຂວງອື່ນ ຕ້ອງແຈ້ງໜັງສືເດີນທາງ, ໃບຢັ້ງຢືນການຈຳກັດບໍລິເວນ ຄົບ 14 ວັນ ແລະ ໜັງສືອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ໂດຍບໍ່ໃຫ້ມີການຈຳກັດບໍລິເວນ ຢູ່ແຂວງປາຍທາງ. ຍົກເວັ້ນຄົນຕ່າງປະເທດທີ່ເຮັດວຽກ ຫຼື ໄດ້ດຳລົງຊີວິດ ຢູ່ ສປປ ລາວ ມາໄລຍະໜຶ່ງແລ້ວ ແມ່ນໃຫ້ປະຕິບັດຄືກັນກັບພົນລະເມືອງລາວ.

- ສຳລັບຜູ້ໂດຍສານ ແລະ ຜູ້ຂັບຂີ່ລົດ ເຂົ້າ-ອອກ ແຂວງທີ່ມີການລະບາດໃນຊຸມຊົນ ຕ້ອງແມ່ນຜູ້ທີ່ໄດ້ສັກວັກຊີນ ຄົບໂດສ ໂດຍບໍ່ຕ້ອງຂໍອະນຸຍາດແຂວງປາຍທາງ, ບໍ່ໃຫ້ມີການຈຳກັດບໍລິເວນ ແລະ ຕ້ອງປະຕິບັດຕາມມາດຕະການທີ່ຄະນະສະເພາະກິດ ວາງອອກຢ່າງເຂັ້ມງວດ ເປັນຕົ້ນ ແທກອຸນຫະພູມ, ການຮັກສາໄລຍະຫ່າງ ຢ່າງໜ້ອຍ 01 ແມັດ, ໃສ່ຜ້າອັດປາກ-ດັງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື ເລື້ອຍໆ. ສະເພາະບາງແຂວງທາງພາກກາງ ແລະ ພາກໃຕ້ ທີ່ພວມມີການລະບາດໃນຊຸມຊົນ ທັງມີແຮງງານລາວກັບຄືນປະເທດ ໃຫ້ອົງການປົກຄອງແຂວງ ອອກມາດຕະການເຂັ້ມງວດຕໍ່ການເດີນທາງໄປ-ມາ ພາຍໃນແຂວງ ແລະ ການເຂົ້າ-ອອກລະຫວ່າງແຂວງຕົນ ກັບ ແຂວງອື່ນ.

2.8. ສືບຕໍ່ອະນຸຍາດໃຫ້ຜູ້ຂັບຂີ່ລົດ ແລະ ພະນັກງານຂົນສົ່ງສິນຄ້າ ເຂົ້າ-ອອກ ລະຫວ່າງ ແຂວງ ຫາ ແຂວງ ແລະ ນະຄອນຫຼວງວຽງຈັນ ຫາ ແຂວງ ສາມາດສົ່ງສິນຄ້າ ເຖິງປາຍທາງໄດ້ ໂດຍບໍ່ຈຳເປັນຕ້ອງຖ່າຍສິນຄ້າໃນໄລຍະເດີນທາງ, ບໍ່ຕ້ອງກວດຫາເຊື້ອພະຍາດ COVID-19 ແລະ ບໍ່ຈຳກັດບໍລິເວນ ຢູ່ແຂວງປາຍທາງແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ. ສຳລັບການຂົນສົ່ງສິນຄ້າລະຫວ່າງປະເທດ ໃຫ້ສືບຕໍ່ຈັດຕັ້ງປະຕິບັດ ຕາມທີ່ໄດ້ເຄີຍປະຕິບັດໃນໄລຍະຜ່ານມາ. ໃນພາກປະຕິບັດຕົວຈິງ ໃຫ້ທຸກພາກສ່ວນກ່ຽວຂ້ອງ ປະຕິບັດເປັນແບບດຽວ ຕາມຄຳແນະນຳ ຂອງຄະນະສະເພາະກິດຂັ້ນສູນກາງ ແລະ ຄຳແນະນຳ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021.

2.9. ໃຫ້ບັນດາກະຊວງ, ອົງການທຽບເທົ່າ, ລວມທັງ ສຳນັກງານ, ວິສາຫະກິດຕ່າງໆ ທີ່ນະຄອນຫຼວງວຽງຈັນພິຈາລະນາໃຫ້ພະນັກງານ, ລັດຖະກອນ, ກຳມະກອນຂອງຕົນ ມາປະຈຳການປົກກະຕິ ແຕ່ໃຫ້ມີການວັດແທກອຸນຫະພູມ, ມີເຈວລ້າງມືຢູ່ທາງເຂົ້າ, ໃສ່ຜ້າອັດປາກ-ດັງ, ຮັກສາໄລຍະຫ່າງ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື.

2.10. ສືບຕໍ່ອະນຸຍາດໃຫ້ເປີດການຮຽນ-ການສອນ ສໍາລັບການສຶກສາກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາ, ວິທະຍາໄລ ແລະ ການສຶກສາຊັ້ນສູງ ຢູ່ແຂວງທີ່ບໍ່ມີການລະບາດໃນຊຸມຊົນ ໂດຍໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ.

3. <u>ມາດຕະການຜ່ອນຜັນໃໝ່</u> :

3.1. ອະນຸຍາດໃຫ້ສູນກິລາໃນຮົ່ມ ແລະ ກາງແຈ້ງທຸກປະເພດ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທີ່ບໍ່ມີການລະບາດໃນຊຸມຊົນ ເປີດບໍລິການໄດ້ ແຕ່ຕ້ອງແມ່ນສູນກິລາທີ່ໄດ້ຮັບອະນຸຍາດຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ, ທັງຫ້າມບໍ່ໃຫ້ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ໃຫ້ປະຕິບັດຕາມມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ເຊື້ອ ທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ.

3.2. ອະນຸຍາດໃຫ້ເປີດຮ້ານນວດ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງທີ່ບໍ່ມີການລະບາດໃນຊຸມຊົນ ໂດຍຜູ້ໃຫ້ບໍລິການ ແລະ ຜູ້ຮັບບໍລິການ ຕ້ອງໄດ້ຮັບວັກຊີນຄົບໂດສ, ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ຢ່າງເຂັ້ມງວດ ແລະ ໃຫ້ປິດບໍລິການ ເວລາ 20:00 ໂມງ.

3.3. ອະນຸຍາດໃຫ້ເປີດຊັ້ນຮຽນອາຊີວະສຶກສາ, ການສຶກສາຄູ ແລະ ການສຶກສາຊັ້ນສູງ ທຸກຊັ້ນ ຢູ່ນະຄອນຫຼວງວຽງຈັນ ໂດຍໃຫ້ຈັດຫ້ອງຮຽນແບບຮັກສາໄລຍະຫ່າງ ແລະ ປະຕິບັດບັນດາມາດຕະການປ້ອງກັນ ແລະ ຄວບຄຸມ ການແຜ່ລະບາດຂອງພະຍາດ COVID-19 ຢ່າງເຂັ້ມງວດ.

4. ໃຫ້ອົງການປົກຄອງແຂວງພາກກາງ ແລະ ພາກໃຕ້ ສົມທົບກັບ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າເພີ່ມສູນຈໍາກັດບໍລິເວນ ທັງໃຫ້ມີກົນໄກການປຶກສາຫາລືກັນ ລະຫວ່າງ ແຂວງຕໍ່ແຂວງ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງດ້ານສະຖານທີ່ຈໍາກັດບໍລິເວນ, ພະນັກງານແພດໝໍ ເພື່ອຫຼຸດຜ່ອນຄວາມຫຍຸ້ງຍາກຂອງບາງແຂວງ ກໍຄື ຫຼຸດຜ່ອນຄວາມສ່ຽງ ຈາກການຕິດເຊື້ອໃນສູນຈໍາກັດບໍລິເວນ ແລະ ເພີ່ມສະຖານທີ່ຈະໃຊ້ເປັນສູນປິ່ນປົວຄົນເຈັບທີ່ເປັນໂຄວິດແຕ່ບໍ່ສະແດງອາການ, ພ້ອມລະດົມແພດ, ພະຍາບານ ແລະ ເຈົ້າໜ້າທີ່ ເພື່ອຮອງຮັບການເພີ່ມຂຶ້ນຂອງຄົນເຈັບບໍ່ໃຫ້ລົ້ນໂຮງໝໍ.

5. ລັດຖະບານ ສືບຕໍ່ສົ່ງເສີມຄວາມມີນໍ້າໃຈເອື້ອເຟື້ອເພື່ອແຜ່ ຊຶ່ງກັນ ແລະ ກັນ ຂອງຄົນລາວທັງຊາດ ລວມທັງຂອງຜູ້ປະກອບການທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທຸກລະດັບ ໃນການປະກອບສ່ວນເຂົ້າໃນການປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ທີ່ລັດຖະບານວາງອອກ ດ້ວຍຮູບການຕ່າງໆ ທັງສະຕິປັນຍາ, ວັດຖຸປັດໃຈ, ເຫື່ອແຮງ ແລະ ດໍາເນີນໄປດ້ວຍຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ຢ່າງຈິງຈັງ.

6. ມອບໃຫ້ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ຄະນະສະເພາະກິດທຸກຂັ້ນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເດັດຂາດ ແລະ ເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ຄໍາເຈນ ວົງໂພສີ

<u>ບ່ອນນໍາສົ່ງ:</u>

| | | |
|---|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | | 04 ສະບັບ; |
| 2. ອົງການຮັ້ງແຂກ ຍິກ-ວັກ | ບ່ອນລະ | 01 ສະບັບ; |
| 3. ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ | ບ່ອນລະ | 01 ສະບັບ; |
| 4. ຄະນະເລຂາທິການສະພາແຫ່ງຊາດ | | 01 ສະບັບ; |
| 5. ຄະນະ ຫສບບ, ຫ້ອງລະ | | 01 ສະບັບ; |
| 6. ສໍານວນ | | 01 ສະບັບ. |